# ແຈ້ງການກ່ຽວກັບຜົນການສືບສວນຂອງພະແນກ



| | | | | | |
|---|---|---|---|---|---|
| ວັນທີສົ່ງໄປສະນີ: | | ເຫດການເລກທີ: | | ຫ້ອງການ DCF: | |

ເຖິງ:
ທີ່ຢູ່:
ຖະໜົນ/ຕູ້.ປ. ນ
ເມືອງ ລັດ
ລະຫັດໄປສະນີ

ຈາກ:
ເບີໂທລະສັບ:
ທີ່ຢູ່:
ຖະໜົນ/ຕູ້.ປ. ນ
ເມືອງ ລັດ
ລະຫັດໄປສະນີ

| | |
|---|---|
| ພະແນກເດັກນ້ອຍ ແລະ ຄອບຄົວລັດ Kansas ໄດ້ເຮັດສຳເລັດການສືບສວນລາຍງານລົງວັນທີ: | *("ວັນທີລາຍງານ" ໃນ PPS 1001)* |

ໄດ້ມີການເຮັດຄຳຕັດສິນຕໍ່ໄປນີ້:

| ຊື່ເດັກນ້ອຍ/ ຜູ້ເຄາະຮ້າຍທີ່ຖືກກ່າວຫາ | ຂໍ້ກ່າວຫາ | ສິ່ງຄົ້ນພົບ | ຜູ້ກະທຳຜິດທີ່ຖືກກ່າວຫາ ຫຼື ຜູ້ກະທຳຜິດທີ່ຢືນຢັນ ຫຼື ພິສູດຄວາມຜິດແລ້ວ* |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |

*ໝາຍເຫດຕໍ່ກັບຜູ້ກະທຳຜິດທີ່ຢືນຢັນຄວາມຜິດແລ້ວ: ຜົນການສືບສວນກໍລະນີທີ່ຢືນຢັນແລ້ວບໍ່ສົ່ງຜົນເຮັດໃຫ້ຊື່ຂອງຜູ້ກະທຳຜິດຖືກບັນຈຸເຂົ້າໃນທະບຽນກາງເລື່ອງການທາລຸນ/ການລະເລີຍເດັກຂອງລັດ **Kansas.** ຜູ້ກະທຳຜິດທີ່ຢືນຢັນຄວາມຜິດແລ້ວມີໂອກາດອຸທອນຜົນການສອບສວນຂອງພະແນກເດັກນ້ອຍ ແລະ ຄອບຄົວ (DCF) ລັດ **Kansas** ໄດ້. ເບິ່ງຂໍ້ມູນເພີ່ມເຕີມຢູ່ດ້ານຫຼັງ.

*ໝາຍເຫດຕໍ່ກັບຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວ: ຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວມີໂອກາດອຸທອນຜົນການສືບສວນຂອງອົງການໄດ້. ຖ້າຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວບໍ່ອຸທອນ ຫຼື ການອຸທອນບໍ່ສຳເລັດ, ຊື່ຂອງຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວຈະຖືກບັນຈຸໃສ່ທະບຽນກາງເລື່ອງການທາລຸນ/ການລະເລີຍຂອງລັດ **Kansas.** ບຸກຄົນຜູ້ທີ່ມີຊື່ຢູ່ໃນທະບຽນກາງບໍ່ໄດ້ຮັບອະນຸຍາດຈາກກົດໝາຍໃຫ້ເຮັດວຽກ, ອາໄສຢູ່ ຫຼື ເປັນອາສາສະໝັກປະຈຳຢູ່ໃນເຮືອນ ຫຼື ສະຖານດູແລເດັກທີ່ໄດ້ຮັບອະນຸຍາດ ຫຼື ຖືກຄວບຄຸມໂດຍພະແນກສຸຂະພາບ ແລະ ສິ່ງແວດລ້ອມລັດ **Kansas (KDHE)** ຫຼື **Foster Care** ແລະ **Residential Facility Licensing** ຂອງພະແນກເດັກນ້ອຍ ແລະ ຄອບຄົວ (**DCF**) ລັດ **Kansas.** ຜົນການສືບສວນທີ່ພິສູດແລ້ວອາດຈະມີຜົນກະທົບຕໍ່ກັບສະຖານະການຈ້າງງານໃນປັດຈຸບັນຂອງຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວຢູ່ໃນສະຖານດູແລ ຫຼື ບ່ອນຢູ່ອາໄສເດັກທີ່ໄດ້ຮັບອະນຸຍາດ ຫຼື ຖືກຄວບຄຸມໂດຍ **KDHE** ຫຼື **DCF Foster Care** ແລະ **Residential Facility Licensing** ແລະ ຄວາມສາມາດຂອງບຸກຄົນດັ່ງກ່າວໃນການໄດ້ຮັບການຈ້າງງານໃນອະນາຄົດ. ໃຫ້ເບິ່ງໜ້າເຈ້ຍເບື້ອງຫຼັງກ່ຽວກັບຂໍ້ມູນສຳຄັນເພີ່ມເຕີມໃນການດຳເນີນການຂອງການຂໍອຸທອນແລະການລົບລ້າງ(ຄະດີ)

| ຄຳແນະນຳ: | ☐ | ບໍ່ | ☐ | ແມ່ນ | ຄຳແນະນຳເອກະສານ: |
|---|---|---|---|---|---|

| | | |
|---|---|---|
| ຜົນການສືບສວນກໍລະນີໄດ້ພິສູດ ຫຼື ຢືນຢັນຄວາມຜິດກັບເດັກທີ່ມີອາຍຸຕ່ຳກວ່າສາມປີບໍ? | ☐ ແມ່ນ<br>☐ ບໍ່ | ແມ່ນ<br>ຖ້າແມ່ນ, ຈະຕ້ອງເຮັດສຳເລັດການນຳສົ່ງຫາການບໍລິການເດັກເກີດໃໝ່-ເດັກຮຽນ. |

ພື້ນຖານຂອງຄຳຕັດສິນ:

| | | | |
|---|---|---|---|
| ການແຈກຢາຍ/ສຳເນົາ: | × ໃນກ່ອງຊີບອກບຸກຄົນທີ່ໄດ້ຮັບສຳເນົາຂອງແຈ້ງການນີ້. | ☐ | ແຟ້ມ |
| ☐ ພໍ່ແມ່/ຜູ້ໃຫ້ການດູແລເດັກ | ☐ ຜູ້ກະທຳຜິດທີ່ຖືກກ່າວຫາ | ☐ | ເດັກ |
| ☐ ຜູ້ຮັບເໝົາທີ່ໃຫ້ການບໍລິການ | ☐ ຫົວໜ້າສະຖານທີ | ☐ | ອົງການບັນຈຸເດັກເຂົ້າໃນສະຖານສົງເຄາະ |
| ☐ KDHE | ☐ ພະນັກງານພາກສະໜາມຝ່າຍສຸຂະພາບຈິດປະຈຳເຂດ | ☐ | KDADS |
| ☐ KDOC-JS | ☐ DCF Foster Care ແລະ Residential Facility Licensing | ☐ | ຜູ້ຈັດການຝ່າຍຜູ້ໃຫ້ການດູແລເດັກຂອງ DCF |
| ☐ ທະນາຍຄວາມເຂດປົກຄອງ/ | ☐ | | |

| ເມືອງ (SB/AF) | | | |
|---|---|---|---|

## ຂໍ້ມູນສຳຄັນ

**ຄຳສັບ "ບໍ່ພິສູດໄດ້", "ຢືນຢັນແລ້ວ" ແລະ "ພິສູດແລ້ວ" ໝາຍຄວາມວ່າແນວໃດ?**

ລາຍງານການທາລຸນ ຫຼື ການລະເລີຍເດັກທີ່ກ່າວຫາ ຫຼື ສົງໄສວ່າເກີດຂຶ້ນຖືກກຳນົດວ່າ "ບໍ່ພິສູດໄດ້" ຖ້າບຸກຄົນທີ່ມີເຫດຜົນທົ່ວໄປຈະສະຫຼຸບໄດ້ວ່າມັນເປັນໄປໄດ້ຫຼາຍກວ່າວ່າ (ນ້ຳໜັກຂອງຫຼັກຖານ) ຂໍ້ເທັດຈິງ ຫຼື ສະພາບການບໍ່ສົ່ງຜົນໃຫ້ເກີດການຄົ້ນພົບການທາລຸນ ແລະ/ຫຼື ການລະເລີຍ ອີງຕາມຄຳນິຍາມຂອງ Kansas Statutes Annotated (K.S.A.) ແລະ Kansas Administrative Regulations (K.A.R.).

ລາຍງານການທາລຸນ ຫຼື ການລະເລີຍເດັກທີ່ກ່າວຫາ ຫຼື ສົງໄສວ່າເກີດຂຶ້ນຖືກກຳນົດວ່າ "ຢືນຢັນແລ້ວ" ຖ້າບຸກຄົນທີ່ມີເຫດຜົນທີ່ຮູ້ຈັກຂໍ້ເທັດຈິງ ແລະ ສະພາບການແລ້ວຈະສະຫຼຸບວ່າມັນເປັນໄປໄດ້ຫຼາຍກວ່າ (ນ້ຳໜັກຂອງຫຼັກຖານ) ວ່າການກະທຳ ຫຼື ການບໍ່ກະທຳຂອງຜູ້ກະທຳຜິດແມ່ນຕອບສະໜອງໄດ້ຄຳນິຍາມການທາລຸນ ແລະ/ຫຼື ການລະເລີຍເດັກອີງຕາມ K.S.A. ແລະ K.A.R. ທີ່ນຳໃຊ້.

ລາຍງານການທາລຸນ ຫຼື ການລະເລີຍເດັກທີ່ກ່າວຫາ ຫຼື ສົງໄສວ່າເກີດຂຶ້ນຖືກກຳນົດວ່າ "ພິສູດແລ້ວ" ຖ້າບຸກຄົນທີ່ມີເຫດຜົນທີ່ຮູ້ຈັກຂໍ້ເທັດຈິງ ແລະ ສະພາບການແລ້ວຈະສະຫຼຸບວ່າມັນເປັນໄປໄດ້ຫຼາຍກວ່າ (ນ້ຳໜັກຂອງຫຼັກຖານ) ວ່າການກະທຳ ຫຼື ການບໍ່ກະທຳຂອງຜູ້ກະທຳຜິດແມ່ນຕອບສະໜອງໄດ້ຄຳນິຍາມການທາລຸນ ແລະ/ຫຼື ການລະເລີຍເດັກອີງຕາມ K.S.A. ແລະ K.A.R. ທີ່ນຳໃຊ້ ແລະ ຕອບສະໜອງໄດ້ເກນເງື່ອນໄຂສຳລັບຜົນການສືບສວນກໍລະນີທີ່ພິສູດແລ້ວ. ຜົນການສືບສວນກໍລະນີທີ່ພິສູດແລ້ວສົ່ງຜົນເຮັດໃຫ້ຊື່ຂອງຜູ້ກະທຳຜິດຖືກບັນຈຸເຂົ້າໃນທະບຽນກາງເລື່ອງການທາລຸນ/ການລະເລີຍເດັກຂອງລັດ Kansas. ຈາກນັ້ນ ຜູ້ກະທຳຜິດຖືກຫ້າມບໍ່ໃຫ້ອາໄສຢູ່, ເຮັດວຽກ ຫຼື ເປັນອາສາສະໝັກຢ່າງເປັນປົກກະຕິຢູ່ໃນສະຖານດູແລເດັກທີ່ໄດ້ຮັບອະນຸຍາດ ຫຼື ຖືກຄວບຄຸມໂດຍ KDHE ຫຼື Foster Care ແລະ Residential and Facility Licensing ຂອງພະແນກເດັກນ້ອຍ ແລະ ຄອບຄົວລັດ Kansas.

ຂໍ້ມູນກ່ຽວກັບຜົນການສືບສວນທີ່ບໍ່ພິສູດໄດ້, ຢືນຢັນແລ້ວ ຫຼື ພິສູດແລ້ວຖືກຈຳກັດໂດຍກົດໝາຍ ແລະ ບໍ່ມີໃຫ້ແກ່ສາທາລະນະຊົນທົ່ວໄປ (K.S.A. 38-2209 et seq). ຂໍ້ມູນນີ້ຖືກຮັກສາໄວ້ໂດຍ DCF ເພື່ອຈຸດປະສົງຊ່ວຍເຫຼືອພະແນກ ຖ້າໄດ້ຮັບລາຍງານເພີ່ມເຕີມກ່ຽວກັບເດັກນ້ອຍ ຫຼື ຜູ້ໃຫຍ່ດຽວກັນ. ຂໍ້ມູນນີ້ມີໃຫ້ແກ່ໜ່ວຍງານອື່ນທີ່ມີຄວາມຮັບຜິດຊອບຕາມກົດໝາຍໃນການປົກປ້ອງເດັກນ້ອຍ ຫຼື ຕາມທີ່ກົດໝາຍກຳນົດໄວ້.

**ຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວ**

ຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວແມ່ນບຸກຄົນຜູ້ທີ່ຖືກພິສູດແລ້ວວ່າໄດ້ກະທຳການທາລຸນ ຫຼື ລະເລີຍເດັກແທ້ ຕາມທີ່ກຳນົດໄວ້ໂດຍ Kansas Statues Annotated 38-2202 ແລະ Kansas Administrative Regulations ແລະ ຈາກນັ້ນຖືກຫ້າມບໍ່ໃຫ້ອາໄສຢູ່, ເຮັດວຽກ ຫຼື ເປັນອາສາສະໝັກປະຈຳຢູ່ໃນສະຖານດູແລເດັກອີງຕາມ K.S.A. 65-516, ແລະ ການແກ້ໄຂປັບປຸງໃນນັ້ນ. DCF ໄດ້ກຳນົດເກນເງື່ອນໄຂສຳລັບການຕັດສິນກຳນົດວ່າເວລາໃດຜູ້ກະທຳຜິດໃດໜຶ່ງໄດ້ຖືກພິສູດຄວາມຜິດແລ້ວ. ບຸກຄົນທີ່ຕອບສະໜອງໄດ້ເກນເງື່ອນໄຂນັ້ນແມ່ນຖືວ່າພິສູດຄວາມຜິດແລ້ວ ແລະ ຊື່ຂອງເຂົາເຈົ້າຖືກເອົາເຂົ້າໃນທະບຽນກາງເລື່ອງການທາລຸນ ແລະ ການລະເລີຍເດັກຂອງລັດ Kansas. ທະບຽນກາງເລື່ອງການທາລຸນເດັກຂອງລັດ Kansas ແມ່ນລາຍຊື່ບຸກຄົນຜູ້ທີ່ໄດ້ຖືກຢືນຢັນ, ຮັບຮອງ ຫຼື ພິສູດຄວາມຜິດແລ້ວສຳລັບການທາລຸນ ຫຼື ການລະເລີຍເດັກ.

ກົດໝາຍລັດ Kansas (K.S.A. 65-516) ກຳນົດໄວ້ວ່າຫ້າມບຸກຄົນໃດໆກໍຕາມດຳເນີນສະຖານດູແລ ຫຼື ພັກເຊົາເດັກທີ່ມີໃບອະນຸຍາດ ຖ້າມີການໃຫ້ການຢູ່ອາໄສ, ການເຮັດວຽກ ຫຼື ການເປັນອາສາສະໝັກປະຈຳແກ່ບຸກຄົນທີ່ມີຊື່ໃນທະບຽນການທາລຸນວ່າເປັນຜູ້ຖືກຢືນຢັນ, ຮັບຮອງ ຫຼື ພິສູດຄວາມຜິດແລ້ວສຳລັບການທາລຸນ ຫຼື ການລະເລີຍເດັກ.

ແຈ້ງການກ່ຽວກັບການພິສູດຄວາມຜິດຈະຖືກສະໜອງໃຫ້ແກ່ພະແນກສຸຂະພາບ ແລະ ສິ່ງແວດລ້ອມລັດ Kansas, Foster Care ແລະ Residential Facility Licensing ຂອງພະແນກເດັກນ້ອຍ ແລະ ຄອບຄົວລັດ Kansas, ແລະ ແກ່ສະຖານດູແລ ຫຼື ຢູ່ອາໄສຂອງເດັກນ້ອຍ.

**ການເປີດເຜີຍຂໍ້ມູນ**

ຂໍ້ມູນກ່ຽວກັບລາຍງານ ຫຼື ຜົນການສືບສວນເລື່ອງການທາລຸນ ແລະ ການລະເລີຍເດັກບໍ່ມີໃຫ້ແກ່ສາທາລະນະຊົນທົ່ວໄປ. ຂໍ້ມູນນີ້ຖືກຮັກສາໄວ້ໂດຍ DCF ເພື່ອຈຸດປະສົງຊ່ວຍເຫຼືອພະແນກ ຖ້າໄດ້ຮັບລາຍງານເພີ່ມເຕີມກ່ຽວກັບເດັກນ້ອຍ ຫຼື ຜູ້ໃຫຍ່ດຽວກັນ. ຂໍ້ມູນນີ້ມີໃຫ້ແກ່ໜ່ວຍງານອື່ນທີ່ມີຄວາມຮັບຜິດຊອບຕາມກົດໝາຍໃນການປົກປ້ອງເດັກນ້ອຍ ຫຼື ຕາມທີ່ກົດໝາຍກຳນົດໄວ້ (K.S.A. 38-2209 et seq). ຂໍ້ມູນກ່ຽວກັບຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວຈະຖືກເປີດເຜີຍຕາມທີ່ກົດໝາຍກຳນົດໄວ້ ຫຼື ຫຼັງຈາກການເປີດເຜີຍຂໍ້ມູນເປັນລາຍລັກອັກສອນໂດຍບຸກຄົນຜູ້ທີ່ມີຊື່ໃນທະບຽນນັ້ນ.

**ສິດທິໃນການອຸທອນຄຳຕັດສິນ**

ຜູ້ກະທຳຜິດທີ່ຢືນຢັນ ຫຼື ພິສູດຄວາມຜິດແລ້ວອາດຈະຂໍອຸທອນຄຳຕັດສິນການພິສູດຄວາມຜິດສຳລັບການທາລຸນ ແລະ/ຫຼື ການລະເລີຍໂດຍການຍື່ນຄຳຮ້ອງຂໍການໄຕ່ສວນຍຸຕິທຳເປັນລາຍລັກອັກສອນ ໂດຍປະຕິບັດຕາມ K.A.R. 30-7-68 *et seq.* ນຳສຳນັກງານໄຕ່ສວນດ້ານການປົກຄອງ (Office of Administrative Hearings), ພະແນກການປົກຄອງລັດ (Kansas Department of Administration), 1020 S. Kansas, Topeka, Kansas 66612-1327 ພາຍໃນ 30 ວັນນັບຈາກວັນທີສົ່ງແຈ້ງການຜົນການສືບສວນຂອງພະແນກນີ້ທາງໄປສະນີ. ອະນຸຍາດໃຫ້ເວລາຕື່ມອີກ 3 ວັນ ຖ້າແຈ້ງການຜົນການສືບສວນຂອງພະແນກຖືກສົ່ງທາງໄປສະນີ. ສາມາດຂໍເອົາຂໍ້ມູນເພີ່ມເຕີມ ຫຼື ຄຳ

ຮ້ອງຂໍການໄຕ່ສວນຍຸຕິທຳໄດ້ຈາກຫ້ອງການ DCF ທຸກແຫ່ງ ຫຼື ທາງອອນລາຍທີ່ https://oah.ks.gov/Home/FilingMethods. ບຸກຄົນທີ່ຖືກຢືນຢັນ ຫຼື ພິສູດຄວາມຜິດແລ້ວສາມາດມີທະນາຍຄວາມທາງກົດໝາຍ ຫຼື ບຸກຄົນອື່ນເປັນຕົວແທນໃຫ້ບຸກຄົນນັ້ນຢູ່ໃນການໄຕ່ສວນໄດ້. ຖ້າບຸກຄົນທີ່ຖືກຢືນຢັນ ຫຼື ພິສູດຄວາມຜິດແລ້ວບໍ່ພໍໃຈກັບຄຳຕັດສິນຈາກການໄຕ່ສວນ, ບຸກຄົນທີ່ມີຜົນການສືບສວນເປັນຢືນຢັນ ຫຼື ພິສູດຄວາມຜິດແລ້ວສາມາດຮ້ອງຂໍເປັນລາຍລັກອັກສອນເອົາການທົບທວນຄຳຕັດສິນໂດຍຄະນະກຳມະການອຸທອນຂັ້ນລັດໄດ້. ສາມາດຂໍອຸທອນຄຳຕັດສິນຂອງຄະນະກຳມະການອຸທອນຂັ້ນລັດຫາສານເຂດໄດ້.

**ການລຶບຊື່ອອກຈາກທະບຽນກາງ**

ຖ້າຊື່ຂອງຜູ້ກະທຳຜິດທີ່ພິສູດຄວາມຜິດແລ້ວຖືກບັນຈຸເຂົ້າໃນທະບຽນກາງເລື່ອງການທາລຸນ ແລະ ການລະເລີຍເດັກ, ບຸກຄົນດັ່ງກ່າວສາມາດຮ້ອງຂໍຫາເລຂາທິການຂອງ DCF ເພື່ອຂໍໃຫ້ລຶບຊື່ຂອງຕົນອອກຈາກທະບຽນກາງ ເມື່ອເວລາຜ່ານໄປສາມປີແລ້ວນັບຈາກການບັນຈຸຊື່ຂອງບຸກຄົນທີ່ພິສູດຄວາມຜິດແລ້ວເຂົ້າໃສ່ທະບຽນນັ້ນຄັ້ງຫຼ້າສຸດ ແລະ ເມື່ອມີການປ່ຽນແປງສະພາບການຂອງຜູ້ກ່ຽວ ຫຼື ມີຂໍ້ມູນໃໝ່ໃຫ້ຄະນະກຳມະການພິຈາລະນາ. ຄຳຮ້ອງຂໍໃຫ້ລຶບຊື່ອອກຈາກທະບຽນຈະຕ້ອງເປັນລາຍລັກອັກສອນ ແລະ ຈະຖືກນຳສົ່ງຫາເລຂາທິການຂອງພະແນກເດັກນ້ອຍ ແລະ ຄອບຄົວ, ໂດຍສົ່ງຫາ: Prevention and Protection Services, 555 S. Kansas Ave., 4th floor, Topeka, KS 66603.

Kansas
Department for Children and Families
*Prevention and Protection Services*
*Strong Families Make a Strong Kansas*